ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ
ສົ່ງ
ເລກທີ...1173.....
ວັນທີ...1 3 NOV 2015
ໂທລະສັບ 021 217770

ເລກທີ: 44/ທຫ
ນະຄອນຫຼວງວຽງຈັນ, ວັນທີ: 9 ພະຈິກ 2015

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 26/10/2015 ຫາ 30/10/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງດັດຊະນີພາກການຜະລິດຂອງ ສ. ອາເມລິກາ ເພີ່ມຂຶ້ນເປັນ 54 ໃນເດືອນ 10/2015 ຈາກ 53,1 ໃນເດືອນຜ່ານມາ ແລະ ຕົວເລກການລ້າງບ້ານໃໝ່ຂອງ ສ. ອາເມລິກາ ໃນເດືອນ 9/2015 ເພີ່ມຂຶ້ນ 80.000 ຫຼັງທຽບໃສ່ເດືອນຜ່ານມາເປັນ 1,21 ລ້ານຫຼັງ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 20/10/2015 | ອາທິດນີ້ 27/10/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1345 | 1,1057 | 2,61% |
| ໂດລາ/ເຢນ | 119,51 | 120,63 | -0,93% |
| ໂດລາ/ບາດ | 35,41 | 35,48 | -0,19% |
| ໂດລາ/ເປໂຊ | 46,25 | 46,66 | -0,88% |
| ໂດລາ/ຣູເປີຍ | 13.624,22 | 13.635,00 | -0,08% |
| ໂດລາ/ໂດລາສິງກະໂປ | 1,3889 | 1,3919 | -0,22% |
| ໂດລາ/ປອນ | 6,3537 | 6,3504 | 0,05% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 2,53% ຈາກ 46,43 ໂດລາ/ບາເຣວ ມາເປັນ 45,25 ໂດລາ/ບາເຣວ ຍ້ອນນັກລົງທຶນມີຄວາມໝັ້ນໃຈຕໍ່ການສະໜອງນ້ຳມັນດິບ ພາຍຫຼັງສຳນັກງານພະລັງງານສາກົນຄາດຄະເນປະລິມານການສະໜອງນ້ຳມັນດິບຂອງປະເທດຊາອຸດີອາລາເບຍໝົດປີນີ້ ແລະ ປີໜ້າໂດຍສະເລ່ຍສູງເຖິງ 10,1 ລ້ານບາເຣວ/ວັນ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,64% ຈາກ 1.171,75 ໂດລາ/ອອນ ມາເປັນ 1.164,24 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,14% ສຳລັບອັດຕາ ທຫລ ແຕ່ແຂງຄ່າຂຶ້ນ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,10% ສຳລັບອັດຕາ ທຫລ ແຕ່ຄົງທີ່ ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,87% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 1,17% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 6,92% ສຳລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 8,35% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 20/10/2015 | | | ອາທິດນີ້ 27/10/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.125,47 | 8.154,81 | 8.137,81 | 8.140,44 | 8.165,27 | 8.149,16 | -0,18% | -0,13% | -0,14% |
| ບາດ | 230,80 | 232,24 | 231,96 | 230,61 | 231,80 | 231,73 | 0,08% | 0,19% | 0,10% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.166,62 | 8.256,07 | 8.211,34 | 8.162,13 | 8.252,13 | 8.207,13 | 0,05% | 0,05% | 0,05% |
| ບາດ | 231,64 | 232,77 | 232,20 | 231,41 | 233,00 | 232,20 | 0,10% | -0,10% | 0,00% |
| ຜິດດ່ຽງອັດຕາ ທຫລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,51% | 1,24% | 0,90% | 0,27% | 1,06% | 0,71% | | | |
| ບາດ | 0,36% | 0,23% | 0,10% | 0,35% | 0,52% | 0,20% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,39% ທຽບໃສ່ວັນທີ 23/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,72%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,81% ເມື່ອທຽບໃສ່ວັນທີ 23/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,40%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 26/10/2015) ເຫັນວ່າ ທຫລ ຂາຍໂດລາສຸດທິ 25,85 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 39,32 ລ້ານໂດລາ ແລະ ຂາຍໂດລາໄດ້ 65,16 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 422,14 ລ້ານບາດ (ໃນນີ້ ຊື້ບາດໄດ້ 251,06 ລ້ານບາດ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ບາດໄດ້ 673,20 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 8,16% ແຕ່ຫຼຸດລົງ 36,21% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,63 ລ້ານໂດລາ ແລະ ເງິນບາດມີຈໍານວນ 34,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 17,80 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 30 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 8,53 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 309,74 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 20/10/2015 | | ອາທິດທີ 26/10/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,56 | 127,24 | 14,31 | 84,38 | -8,01% | -33,69% |
| - ທ/ຄທຸລະກິດອື່ນໆ | 34,50 | 59,95 | 25,01 | 166,69 | -27,53% | 178,05% |
| ລວມຊື້: | **50,06** | **187,19** | **39,32** | **251,06** | **-21,46%** | **34,12%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 25,13 | 190,90 | 12,15 | 112,08 | -51,66% | -41,29% |
| - ທ/ຄທຸລະກິດອື່ນໆ | 21,41 | 1.070,81 | 53,01 | 561,13 | 147,66% | -47,60% |
| ລວມຂາຍ: | **46,54** | **1.261,70** | **65,16** | **673,20** | **40,02%** | **-46,64%** |
| ຊື້-ຂາຍສຸດທິ ທທກ | **3,52** | **-1.074,51** | **-25,85** | **-422,14** | **-833,84%** | **-60,71%** |
| ຜິດດ່ຽງ ຊື້-ຂາຍ | 7,04 | -574,02 | -65,74 | -168,14 | -727,24% | 405,59% |
| ມູນຄ່າການຊື້-ຂາຍ | **96,60** | **1.448,90** | **104,48** | **924,27** | **8,16%** | **-36,21%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 30,00 | | |
| - ທຫລ ຂາຍໃຫ້ ທທກ | 30,64 | 30,00 | 17,80 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-30,64** | **-30,00** | **-17,80** | **30,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **2,81** | **41,40** | **1,63** | **34,50** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 33,38 | 1.147,96 | 0,35 | 309,88 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 28,09 | 0,00 | 8,89 | 0,14 | | |
| ຊື້-ຂາຍສຸດທິ ທຫລ | **5,29** | **1.147,96** | **-8,53** | **309,74** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 10/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,26% ເພີ່ມຂຶ້ນ 0,03% ຈາກ 1,23% ໃນເດືອນ 09/2015 ຍ້ອນລາຄາອາຫານຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເນື່ອງຈາກເປັນໄລຍະອອກພັນສາ ແລະ ເລີ່ມມີງານບຸນປະເພນີຕ່າງໆ.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 110,12 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 55,4 ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 548 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 25,64% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 352,79 ຕື້ກີບ ຫຼຸດລົງ 2,10% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23-29/10/2015) ມີຈຳນວນ 1.170 ຄັ້ງ ໂດຍມີມູນຄ່າ 358 ຕື້ກີບ ຫຼຸດລົງ 39,49% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 309 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.250,75 ຈຸດ ເພີ່ມຂຶ້ນ 0,68% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 125.162 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 610,13 ລ້ານກີບ ເພີ່ມຂຶ້ນ 22,24% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 60,74% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.722 ກີບ/ຮຸ້ນ ຫຼຸດລົງ 45 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.656 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 38,08 ລ້ານກີບ ເພີ່ມຂຶ້ນ 282,59% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 25,29% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,78%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.174 ກີບ/ຮຸ້ນ ຫຼຸດລົງ 2 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 66.657 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 411,55 ລ້ານກີບ ເພີ່ມຂຶ້ນ 14,30% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 57,61% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.706 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 1.067 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,22 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 46,82% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ (LWPC) ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.999 ກີບ/ຮຸ້ນ ເພີ່ມຂຶ້ນ 99 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 50.782 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 152,27 ລ້ານກີບ ເພີ່ມຂຶ້ນ 17,95%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50,95% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມໃຫຍ່ຄັ້ງທີ VII ຂອງຄະນະປະສານງານພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ປະເທດ ສປ. ຈີນ ທີ່ເມືອງວັງວຽງ ແຂວງວຽງຈັນ, ❷ກອງປະຊຸມປຶກສາຫາລືກ່ຽວກັບຄວາມພ້ອມໃນການກະກຽມສະເຫຼີມສະຫຼອງ 2 ວັນປະຫວັດສາດທີ່ ທຫລ;
- ສຳເລັດການສະເໜີໂຄງການ AFP-GIZ ສະໜັບສະໜູນຂໍ້ນງົບປະມານ ໃນການເຂົ້າຮ່ວມຝຶກອົບຮົມ ໃນຫົວຂໍ້: ການເຂົ້າເຖິງແຫຼ່ງທຶນທີ່ຫຼາກຫຼາຍ ແລະ ການສຶກສາ: ຍຸດທະສາດ ແລະ ນະໂຍບາຍ ທີ່ ກົວລາລາເປີ ປະເທດມາເລເຊຍ;
- ສຳເລັດການຕ້ອນຮັບຄະນະທະນາຄານແຫ່ງປະເທດໄທ ທີ່ເດີນທາງມາຈັດກອງປະຊຸມສຳມະນາ ໃນຫົວຂໍ້: "ການຄຸ້ມຄອງເງິນຝາກ ແລະ ລະບົບເຕືອນໄພລວງໜ້າ" ທີ່ ສປປ ລາວ;
- ສຳເລັດການເຂົ້າຮ່ວມສຳມະນາ: ❶ສຳມະນາ ໃນຫົວຂໍ້: "Financial Inclusion Strategy and data Program" ທີ່ປະເທດມາເລເຊຍ, ❷ສຳມະນາ ໃນຫົວຂໍ້: "ການບໍລິຫານການເງິນຈຸລະພາກ" ທີ່ ສູນກາງສະຫະພັນແມ່ຍິງ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກຳລັງ ທີ່ເດີນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ໃນນາມ ແທນຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ອຸດຕະລາ ແກ້ວທາວົງ